ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກການຕົກລົງ
# ກ່ຽວກັບການຈັດຕັ້ງປະຕິບັດການເກັບຄ່າທຳນຽມ ແລະ ຄ່າບໍລິການ
# ອອກໃບທະບຽນວິສາຫະກິດ

ເພື່ອປະຕິບັດຕາມ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ ປປທ, ລົງວັນທີ 17 ມິຖຸນາ 2021 ແລະ ແຈ້ງການເລີ່ມຈັດຕັ້ງປະຕິບັດ ຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1321/ ຫອຄ, ລົງວັນທີ 20 ສິງຫາ 2021. ໃນວັນທີ 23 ສິງຫາ 2021 ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ໄດ້ປຶກສາຫາລື ແລະ ຕົກລົງເຫັນດີເປັນເອກະພາບ ໃນການຈັດຕັ້ງປະຕິບັດການເກັບຄ່າທຳນຽມ ແລະ ຄ່າບໍລິການ ດັ່ງລຸ່ມນີ້:

1. ການອອກໃບທະບຽນວິສາຫະກິດ ໃນການແຈ້ງຂຶ້ນ ແລະ ປ່ຽນແປງເນື້ອໃນທະບຽນວິສາຫະກິດ ກ່ອນວັນທີ 24 ສິງຫາ 2021 ແຕ່ຜູ້ມາແຈ້ງຂຶ້ນທະບຽນວິສາຫະກິດ ຍັງບໍ່ທັນໄດ້ມາຮັບເອົາໃບທະບຽນວິສາຫະກິດ ແລະ ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ. ໃນເວລາຜູ້ມາແຈ້ງຂຶ້ນທະບຽນວິສາຫະກິດ ຫລື ຜູ້ລົງທຶນມາຮັບເອົາໃບທະບຽນວິສາຫະກິດ ແມ່ນໃຫ້ເກັບຄ່າທຳນຽມ ແລະ ຄ່າບໍລິການຕາມອັດຕາທີ່ໄດ້ກຳນົດ ຢູ່ໃນລັດຖະບັນຍັດສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ແລະ ນຳໃຊ້ປຶ້ມບິນຮັບເງິນເກົ່າ.

2. ການອອກໃບທະບຽນວິສາຫະກິດ ໃນການແຈ້ງຂຶ້ນ ແລະ ປ່ຽນແປງເນື້ອໃນທະບຽນວິສາຫະກິດ ເລີ່ມແຕ່ວັນທີ 24 ສິງຫາ 2021 ເປັນຕົ້ນໄປ ແມ່ນເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມອັດຕາທີ່ກຳນົດໄວ້ໃນລັດຖະບັນຍັດສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ຊຶ່ງບິນເກັບເງິນຕ້ອງໄດ້ປ່ຽນແປງເນື້ອໃນ ແລະ ຈັດພິມໃໝ່ ແຕ່ໃນຊ່ວງລໍຖ້າໄດ້ປຶ້ມບິນຫົວໃໝ່ນີ້ ແມ່ນໃຫ້ໃຊ້ຮ່າງບິນທີ່ກຳລັງສະເໜີຈັດພິມນັ້ນກ່ອນ ໂດຍພິມເປັນເຈ້ຍ A4, ພາຍຫລັງຈັດພິມປຶ້ມບິນຮັບເງິນສຳເລັດແລ້ວ ແມ່ນໃຫ້ເລີ່ມໃຊ້ບິນຫົວໃໝ່ ແລະ ສະຫລຸບຄືນການນຳໃຊ້ຮ່າງບິນທີ່ກອບປີ້ ໂດຍສອງຝ່າຍເຊັນຮັບຮູ້ຮ່ວມກັນ.

3. ການເກັບຄ່າທຳນຽມ ໃນການເພີ່ມທຶນຈົດທະບຽນ ຂອງຜູ້ລົງທຶນ ທີ່ເກີນວົງເງິນຄ່າທຳນຽມທຶນຈົດທະບຽນທີ່ເຄີຍເສຍໃນຜ່ານມາ ແມ່ນໃຫ້ເກັບສະເພາະສ່ວນທຶນທີ່ເພີ່ມຂຶ້ນເທົ່ານັ້ນ ທຶນທີ່ຜ່ານມາບໍ່ໃຫ້ໄລ່ເປັນຄ່າທຳນຽມອີກ.

ດັ່ງນັ້ນ ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫລັກຖານ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ນະຄອນຫລວງວຽງຈັນ,ວັນທີ 31 ສິງຫາ 2021

| | |
|---|---|
| ຮັກສາການແທນຫົວໜ້າຫ້ອງການ | ຫົວໜ້າກົມທະບຽນແລະຄຸ້ມຄອງວິສາຫະກິດ |
| ນ.ກົ່ງສະດອນ ເພັດດາວເຮືອງ | ອະພິສິດ ແສງສຸລິວົງ |